## ບົດທີ 3

# ຫຼັກຖານທີ່ພະເຢຊູຄືນຈາກຕາຍ: ພາກປາຍ




*ທັງ 3 ຄົນນີ້ ເຫັນວ່າປຶ້ມທີ່ເຂົາຖືນັ້ນສົມຄວນຈະອ່ານ ສາມເລື່ອງເຫຼົ່ານັ້ນຫາກຕ່າງກັນໄປຄົນລະຢ່າງ. ໃນສາມເລື່ອງນັ້ນມີເລື່ອງທີ່ເປັນຄວາມຈິງແລະມີເລື່ອງທີ່ບໍ່ເປັນຄວາມຈິງ. ໃນບົດຮຽນນີ້ທ່ານຈະຮຽນຮູ້ວ່າ ການຄືນພະຊົນຂອງພະເຢຊູ*

**1** ຫຼັກຖານທີ 3 ທີ່ພະເຢຊູຄືນພະຊົນຄື: **ມີຫຼາຍຄົນທີ່ປ່ຽນທ່າທີໃໝ່**
ໃຫ້ທ່ານເປີດເບິ່ງໜ້າປົກບົດທີ 2 ນັ້ນອີກ. ແມ່ນຮູບໃດ ໃນສາມແຜ່ນນັ້ນທີ່ສະແດງເຖິງຄົນທີ່ປ່ຽນທ່າ ທີໃໝ່? ____________________________________________

**2** ຕໍ່ໄປນີ້ໃຫ້ທ່ານຕື່ມຄວາມທີ່ຂາດໃນຫຼັກຖານ 3 ປະການທີ່ພະເຢຊູຄືນຈາກຕາຍ

ກ. ____________________________________________ຫວ່າງເປົ່າ

ຂ. ພະເຢຊູ ____________________________________________

ຄ. ມີຫຼາຍຄົນທີ່ ____________________________________________

**3** ຂໍ້ພະຄຳພີຕໍ່ໄປນີ້ ກ່າວເຖິງເຫດການກ່ອນພະອົງຄືນພະຊົນ ມທ 26:56 ແລະ 74 ແລະອີກຕໍ່ໄປນີ້ກ່າວເຖິງເຫດ ການທີ່ຫຼັງຈາກການຄືນພະຊົນ ກຈກ 2:14 ກຈກ 4:19 ແລະ 31 ໃນຂໍ້ທີ່ທ່ານອ່ານມາແລ້ວນັ້ນ ແມ່ນພວກໃດທີ່ປ່ຽນທ່າທີໃໝ່ຫຼັງຈາກການຄືນພະຊົນ? (ເລືອກ)

ກ. ______ ພວກລູກສິດຂອງພະອົງ

ຂ. ______ ພວກຟາລີຊາຍ

ຄ. ______ ພວກຄົນໂລມ

**4** ກ. ກ່ອນພະເຢຊູຄືນພະຊົນພວກລູກສິດຂອງພະອົງຂີ້ຢ້ານ ຫຼືກ້າຫານ? ______________

ຂ. ຫຼັງຈາກພະອົງຄືນພະຊົນເຂົາເປັນຢ່າງໃດ? ________________________________

**5** ຫຼັງຈາກການຄືນພະຊົນ ພວກລູກສິດຂອງພະອົງກາຍເປັນຄົນທ່າທີຢ່າງໃດ? __________

**6** ກ. ຖ້າພວກລູກສິດເຫຼົ່ານັ້ນບໍ່ໄດ້ເຫັນພະອົງ ຫຼັງຈາກຄືນພະຊົນແລ້ວເຂົາຈະປ່ຽນທ່າທີນັ້ນບໍ່?

_______________________________________________________________

ຂ. ເຫັນວ່າພວກທີ່ໜີປະພະອົງໃນສວນເຄັດເຊມາເນ ປ່ຽນທ່າທີຈຶ່ງຈະອອກໄປເທດສະໜາຢ່າງກ້າຫານສະແດງວ່າ ຢ່າງໃດ? (ເລືອກ)

_____ ເຂົາບໍ່ໄດ້ເຫັນພະອົງ

_____ ເຂົາແກ້ງເຮັດຄືເຫັນພະອົງ

_____ ເຂົາເຫັນພະອົງແທ້.



**7** ໃຫ້ອ່ານ ກຈກ 2:41 ກຈກ 4:4 ແລະ ກຈກ 5:14 ຍັງມີຄົນອື່ນໆ ທີ່ປ່ຽນທ່າທີໃໝ່ຫຼັງຈາກການຄືນພະຊົນອີກດ້ວຍ ຄືໃຜ? (ເລືອກ)

ກ. _____ ພວກຄົນທີ່ຍັງເຍາະເຍີ້ຍພະອົງ

ຂ. _____ ຈຳນວນຫຼາຍຄົນທີ່ຮັບເອົາພະເຢຊູ

ຄ. _____ ຄົນທີ່ໄລ່ພວກສາວົກອອກຈາກພະວິຫານ

**8** ກ. ຫຼັງຈາກເຂົາເຫັນພະອົງ ພວກລູກສິດຂອງພະອົງທີ່ເຄີຍເປັນຄົນຂີ້ຢ້ານ ກາຍເປັນຄົນຢ່າງໃດ? ________________________________________________________

ຂ. ຈຳພວກຄົນທີ່ບໍ່ໄດ້ເຊື່ອໃນພະເຢຊູກ່ອນ ຄົນຮູ້ວ່າພະອົງຄືນແລ້ວເລີຍເຮັດຢ່າງໃດ?

_______________________________________________________________

**9** ກ. ເຂົາຝັງສົບຂອງພະອົງນອກກຳແພງກຸງໃດ? ______________

ຂ. ຫຼັງຈາກຄືນພະຊົນ ພະອົງປາກົດມາໃກ້ກຸງໃດເປັນຕົ້ນ? ______

ຄ. ຝູງຄົນທັງຫຼາຍມາຮັບເຊື່ອພະອົງໃນເຂດກຸງໃດ? ___________



**10** ມີຄົນຈຳນວນຫຼວງຫຼາຍມາຮັບເຊື່ອໃນພະອົງໃນບ່ອນຢ່າງໃດ? (ເລືອກ)

ກ. ໃນບ່ອນທີ່ເຂົາສືບສວນຫຼັກຖານເລື່ອງການຄືນພະຊົນໄດ້ງ່າຍ.

ຂ. ໃນເຂດທີ່ຈະສືບສວນເລື່ອງການຄືນພະຊົນຍາກຫຼາຍ.

ຄ. ໃນບ່ອນທີ່ບໍ່ມີໃຜຮູ້ເລື່ອງການຄືນພະຊົນດອກ

**11** ຈິງແທ້ ຄົນສ່ວນຫຼາຍທີ່ຮັບເຊື່ອໃນພະເຢຊູ ຢູ່ໃນພື້ນທີ່ເຂົາສາມາດສືບສວນເລື່ອງຫຍັງ? ________________________________

_____________________________________________

**12** ທີ່ເຫັນຄົນໃນກຸງເຢລູຊາເລັມມາຮັບເຊື່ອໃນພະເຢຊູສະແດງວ່າຢ່າງໃດ? (ເລືອກ)

ກ. ______ ທີ່ພະເຢຊູຄືນພະຊົນຈະເປັນໄປບໍ່ໄດ້.

ຂ. ______ ທີ່ພະເຢຊູຄືນພະຊົນນັ້ນໜ້າຈະເປັນໄປໄດ້.

ຄ. ______ ທີ່ພະອົງຄືນພະຊົນບໍ່ໜ້າຈະເປັນໄປໄດ້.

**13** ຖ້າບໍ່ມີຫຼັກຖານວ່າພະເຢຊູຄືນມາຈາກຕາຍຄົນທີ່ຢູ່ໃນກຸງເຢລູຊາເລັມຈະມາຮັບເຊື່ອໃນພະອົງບໍ່? ____________________________________________

**14** ຄົນທີ່ສາມາດຮູ້ເລື່ອງການຄືນພະຊົນຢ່າງແນ່ນອນ ຈະມາຮັບເຊື່ອໃນພະເຢຊູເປັນຈຳນວນຫຼວງຫຼາຍ. ສະແດງວ່າຢ່າງ ໃດ? (ເລືອກ)

ກ. ບໍ່ມີຫຼັກຖານວ່າພະອົງຄືນພະຊົນ.

ຂ. ການຄືນພະຊົນເປັນແຕ່ເລື່ອງຊ່າລືກັນ.

ຄ. ມີຫຼັກຖານຢ່າງແນ່ນອນວ່າພະອົງຄືນພະຊົນ.

**15** ທີ່ມີຝູງຊົນຫຼາຍຄົນໃນກຸງເຢລູຊາເລັມທີ່ຮັບເຊື່ອໃນພະເຢຊູສະແດງວ່າຜູ້ທີ່ ____________ ເລື່ອງການຄືນພະຊົນໄດ້ງ່າຍ ເປັນພວກດຽວກັນກັບຄົນທີ່ໄວ້ວາງໃຈໃນພະເຢຊູ. (ຕື່ມຄວາມ)

**16** ໃຫ້ທ່ານຈົດຄົນສອງຈຳພວກທີ່ປ່ຽນທ່າທີໃໝ່ຫຼັງຈາກທີ່ເຂົາເຫັນພະເຢຊູຄືນພະຊົນ. (ຕື່ມຄວາມຂາດ)

ກ. ພວກ _______________ ຂອງພະອົງທີ່ກາຍເປັນຄົນ _______________________

ຂ. ຝູງຊົນໃນກຸງ _______________________ ທີ່ ____________________________

*ເຫັນວ່າ: ມີຫຼາຍຄົນທີ່ຮູ້ເລື່ອງການຄືນພະຊົນຈຶ່ງປ່ຽນໃຈໃໝ່. ຜູ້ທີ່ປ່ຽນໃຈນັ້ນຢູ່ໃກ້ຈຶ່ງຈະຮູ້ເລື່ອງແລະສາເຫດຢ່າງແນ່ນອນ.*

**17** ຍັງເຫຼືອແຕ່ຄຳທີ່ບັນທຶກໄວ້ໃນພະຄຳພີຄື ພະເຢຊູ __________ ຢ່າງແທ້ຈິງ. (ຕື່ມຄວາມ)

*ທີ່ມີຫຼາຍຄົນປ່ຽນທ່າທີໃໝ່ນັ້ນບໍ່ໄດ້ສິ້ນສຸດກັບພວກສາວົກ. ໃນເກືອບ 2000 ປີຕັ້ງແຕ່ນັ້ນມາມີຫຼາຍຄົນທີ່ປ່ຽນທ່າທີ ໃໝ່ໃນເມື່ອເຂົາຮັບເອົາພະເຢຊູມາເປັນພະຜູ້ຊ່ວຍ. ໃນທຸກວັນນີ້ໄດ້ມີຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່.*

*ທ່ານເດ? ທ່ານໄດ້ຖິ້ມໃຈເກົ່າເອົາໃຈໃໝ່ຢ່າງເປີດເຜີຍບໍ່? ທ່ານໄດ້ປ່ຽນທ່າທີຈົນກວ່າຜູ້ອື່ນຈະເຫັນ ພະເຢຊູມີຊີວິດໃນຕົວຂອງທ່ານບໍ່? (ບໍ່ຕ້ອງຕອບ) ຖ້າຄົນທີ່ບໍ່ຮັບຮູ້ພະເຢຊູ ເມື່ອເຫັນລັກສະນະຂອງພະເຢຊູໃນ ຕົວທ່ານເຂົາອາດຈະໄວ້ວາງໃຈໃນພະອົງ.*

**18** ກ. ໃຫ້ທ່ານຈົດຫຼັກຖານ 3 ປະການທີ່ພະເຢຊູຄືນພະຊົນ.

____________________________________________

____________________________________________

____________________________________________

ຂ. ເຫັນວ່າ ຜູ້ທີ່ບໍ່ເຊື່ອໃນພະອົງບໍ່ມີຫຼັກຖານຈັກປະການດຽວທີ່ພະອົງບໍ່ຄືນ. ດັ່ງນັ້ນຜູ້ທີ່ຮັບພິຈາລະນາໃນເລື່ອງນີ້ ຢ່າງ ຄົບຖ້ວນຈະເຊື່ອວ່າຢ່າງໃດ? ______________________

**19** ຖ້າມີຫຼັກຖານແຕ່ປະການດຽວ ເລື່ອງການຄືນພະຊົນພໍທີ່ຈະພິສູດວ່າ ພະອົງຄືນມາ. ຝ່າຍຄ້ານບໍ່ມີຈັກປະການດຽວ ເຫັນວ່າຫຼັກຖານທີ່ພະເຢຊູຄືນມາມີ 3 ປະການຮ່ວມກັນ. ຫຼັກຖານເຫຼົ່ານັ້ນຮ່ວມກັນເປັນຫຼັກຖານຢ່າງໃດ? (ເລືອກ)




ກ. ______ ບໍ່ແນ່ນອນ ຂ. ______ ຄົບຖ້ວນ ຄ. ______ ເກືອບຈະພໍ

**20** ກ. ມີຫຼາຍຄົນທີ່ມາຮັບເຊື່ອໃນພະອົງຫຼັງຈາກຄືນພະຊົນ ມາຈາກເຂດກຸງໃດ? __________

ຂ. ເປັນຫຍັງຄົນຈາກເຂດນັ້ນຈະສືບສວນເລື່ອງການຄືນພະຊົນຫຼາຍກວ່າຄົນອື່ນ ໆ?

____________________________________________________________

**21** ໃຫ້ກັບໄປເບິ່ງໜ້າປົກບົດທີ 3 ນີ້. ປື້ມຂ້າງຂວາເລື່ອງຈາກປະຫວັດສາດຊາດໃດ? ________

**22** ໃນປື້ມສາມເຫຼັ້ມນັ້ນ ແມ່ນສອງເຫຼັ້ມໃດທີ່ກ່າວເລື່ອງຈິງ? (ເລືອກ)

ກ. ______ ເລື່ອງຊຽງໝ້ຽງ

ຂ. ______ ເລື່ອງການຄືນພະຊົນ

ຄ. ______ ເລື່ອງເຈົ້າຟ້າງຸ່ມ

**23** ກ. ດັ່ງນັ້ນ ເລື່ອງການຄືນພະຊົນມີສ່ວນຄ້າຍຄືກັນກັບເລື່ອງເຈົ້າຟ້າງຸ່ມໃນດ້ານໃດ? (ເລືອກ)

______ ເປັນນິທານທັງສອງ

______ ເປັນຄວາມຝັນທັງສອງ

______ ເປັນຄວາມຈິງທັງສອງ

ຂ. ປື້ມກ່ຽວກັບຊຽງໝ້ຽງເປັນເລື່ອງຢ່າງໃດ? (ເລືອກ)

______ ເປັນແຕ່ນິທານ ______ ເປັນຄວາມຝັນ ______ ເປັນຄວາມຈິງ

**24** ມີນັກສາດສະໜາສາດບາງຄົນທີ່ມັກສອນວ່າ ການຄືນພະຊົນຂອງພະເຢຊູເປັນແຕ່ນິທານທີ່ບໍ່ຈິງ. ເຂົາວ່າພວກລູກ ສິດຂອງພະອົງແຕ່ງເລື່ອງນັ້ນມາຊື່ ໆ. ເຂົາວ່າທີ່ເຮົາຈະເຊື່ອໃນການຄືນພະຊົນ ຫຼືບໍ່ເຊື່ອກໍບໍ່ສຳຄັນ.ເຂົາສອນວ່າເລື່ອງການຄືນພະຊົນຟັງກໍມ່ວນຫູເໝືອນຢ່າງກັບນິທານເລື່ອງຊຽງໝ້ຽງ. ເຂົາຖືວ່າສຳຄັນ ແຕ່ ເຮົາຈະມີຄວາມຫວັງຢູ່ສະເໝີ.

ຖ້າຄຳສອນຂອງນັກສາດສະໜາສາດເຫຼົ່ານັ້ນ ຖືກກັບພະຄຳພີ ເຮົາຮູ້ວ່າເປັນຄວາມຈິງ ແຕ່ຖ້າເຂົາສອນຜິດກັບ ພະຄຳພີ ເຮົາຮູ້ແລ້ວວ່າເປັນຢ່າງໃດ? ________________________

**25** ໃຫ້ອ່ານ 1 ໂກລິນໂທ 15:14-20. ໃນສະໄໝທີ່ອາຈານໂປໂລ ຂຽນຈົດໝາຍໄປເຖິງຄຣິດສະຕະຈັກໂກລິນໂທນັ້ນ ມີ ບາງຄົນທີ່ບໍ່ເຊື່ອວ່າພະອົງຄືນພະຊົນ. ໃນຂໍ້ພະຄຳພີເຫຼົ່ານີ້ອາຈານໂປໂລ ຍົກຄວາມຄິດຂອງເຂົາມາວັດແທກເຫດ ແລະຜົນດັ່ງຕໍ່ໄປນີ້: (ໃຫ້ຕື່ມຄວາມທີ່ຂາດ)

ຂໍ້ 14 ຖ້າພະຄຼິດບໍ່ໄດ້ຊົງຄືນພະຊົນແລ້ວ ການປະກາດຂອງພວກເຮົາກໍບໍ່ມີປະໂຫຍດ ແລະຄວາມເຊື່ອຂອງພວກ ເຈົ້າກໍ _____________ ເໝືອນກັນ.

ຂໍ້ 15 ແລ້ວກໍຈະປາກົດວ່າພວກເຮົາເປັນ _______________ ໃນເລື່ອງພະເຈົ້າ ເພາະພວກເຮົາໄດ້ກ່າວ ອັນວ່າ ພະເຈົ້າໄດ້ຊົງບັນດານໃຫ້ພະຄຼິດເປັນຄືນມາແລ້ວ.

ຂໍ້ 17 ຖ້າວ່າພະຄຼິດບໍ່ໄດ້ຖືກຊົງບັນດານໃຫ້ຄືນພະຊົນແລ້ວ ຄວາມເຊື່ອຂອງເຈົ້າທັງຫຼາຍກໍໄຮ້ປະໂຫຍດ ເຈົ້າທັງ ຫຼາຍ ຍັງຄົງຢູ່ໃນ ___________________ ຂອງຕົນ.

ຂໍ້ 18 ຊໍ້າກວ່ານັ້ນ ພວກຄົນເຊື່ອໃນພະຄຼິດທີ່ຕາຍໄປແລ້ວນັ້ນ ກໍ _________ ໄປດ້ວຍ.

**26** ຂ່າວປະເສີດຂອງພະເຢຊູປະກາດດັ່ງຕໍ່ໄປນີ້:

* ພະອົງໄດ້ພົ້ນຈາກຄວາມບາບ.
* ໃຫ້ຄືນຈາກຕາຍຈິ່ງຈະມີຊີວິດອັນຕະຫຼອດໄປເປັນນິດ.
* ໃຫ້ມີຄວາມຫວັງ ແລະຄວາມໝັ້ນຄົງດ້ານວິນຍານ.

ຖ້າພະເຢຊູບໍ່ໄດ້ຄືນພະຊົນ ຄວາມເຊື່ອຂອງເຮົາຈະເປັນຢ່າງໃດ? (ເລືອກ)

ກ. _____ ຍັງໝັ້ນຄົງຢູ່ ຂ. _____ ຖືກກັບປະຫວັດສາດ ຄ. _____ ບໍ່ມີມູນຖານ

**27** ຖ້າພະເຢຊູບໍ່ໄດ້ຄືນພະຊົນຢ່າງແທ້ຈິງ (ເລືອກ)

ກ. ______ ຈະບໍ່ເປັນຫຍັງ

ຂ. ______ ພວກຄຼິດສະຕຽນເຮົາອາດຈະຕ້ອງປ່ຽນຫຼັກຄວາມເຊື່ອນ້ອຍດຽວ.

ຄ. ______ ຄວາມເຊື່ອຂອງພວກຄຼິດສະຕຽນຈະເປັນແຕ່ນິທານບໍ່ຈິງ

**28** ຖ້າພະເຢຊູບໍ່ໄດ້ຄືນຈາກຕາຍ ສາດສະໜາຄຼິດຈະກາຍເປັນການຫວ່າງເປົ່າ ເພາະຫຍັງ? (ເລືອກ)

ກ. ______ ບໍ່ມີຮາກຖານ

ຂ. ______ ຖືກກັບປະຫວັດສາດ

ຄ. ______ ມີຮາກຖານຢ່າງໝັ້ນຄົງ

**29** ທີ່ພະເຢຊູຄືນຈາກຕາຍເປັນຕົວຈິງ ກໍເປັນຫຼັກສຳຄັນຫຼາຍໃນໂອກາດຄຣິດສະຕຽນໃນສະໄໝນັ້ນຄິດເຫັນໄປເອງ. ຖ້າພະເຢຊູບໍ່ໄດ້ຄືນຈາກຕາຍສາດສະໜາຄຣິດເປັນແຕ່ນິທານມ່ວນຫູ ເປັນຕາຟັງແຕ່ບໍ່ສາມາດ

* ໃຫ້ພົ້ນຈາກຄວາມບາບ

* ໃຫ້ຄືນຈາກຕາຍຈຶ່ງຈະມີຊີວິດອັນຕະຫຼອດໄປ

* ໃຫ້ມີຄວາມຫວັງ ແລະຄວາມໝັ້ນຄົງດ້ານວິນຍານ

ຖ້າພະເຢຊູບໍ່ໄດ້ຄືນຈາກຕາຍ ພະຄຳພີເປັນແຕ່ _________ ທີ່ມ່ວນຫູເໝືອນຢ່າງນິທານທີ່ກ່ຽວກັບຊຽງໝ້ຽງ. (ຕື່ມຄວາມທີ່ຂາດ)

**30** ໃຫ້ອ່ານ 1 ກລທ 15:20 ອາຈານໂປໂລ ທີ່ເປັນນັກປະພັນເຊື່ອວ່າພະເຢຊູຄືນຈາກຕາຍບໍ່? _

**31** ເນື່ອງຈາກທີ່ຄຣິດສະຕຽນເຮົາເຊື່ອວ່າພະເຢຊູຄືນຈາກຕາຍແທ້. ເຮົາຮູ້ດັ່ງຕໍ່ໄປນີ້: (ຕື່ມຄວາມ)

ກ. ພະອົງໃຫ້ພົ້ນຈາກ ______________________________________________

ຂ. ພະອົງຈະໃຫ້ເຮົາຄືນຈາກຕາຍຈຶ່ງມີ ___________________________________

ຄ. ໃຫ້ມີຄວາມ ______________ ແລະຄວາມ ______________________________

**32** ຖ້າພະເຢຊູບໍ່ໄດ້ຄືນຈາກຕາຍແທ້ ພະຄຳພີຈະເປັນແຕ່ນິທານມ່ວນຫູຢ່າງນິທານເລື່ອງໃຜ?

______________________________________________________________________

**33** ໃຫ້ທ່ານຈົດຫຼັກຖານທີ່ພະເຢຊູຄືນຈາກຕາຍທັງ 3 ປະການ

______________________________________________________________________

______________________________________________________________________

______________________________________________________________________

**34** ເຫັນວ່າຜູ້ທີ່ບໍ່ເຊື່ອວ່າ ພະເຢຊູຄືນພະຊົນບໍ່ມີຫຼັກຖານຈັກປະການດຽວທີ່ພິສູດວ່າພະອົງບໍ່ຄືນມາແຕ່ພວກຄຣິດສະຕຽນ ເຮົາມີຫຼັກຖານ 3 ປະການທີ່ພະອົງ ______________________ ມາຈາກ ________________________________ ແລ້ວຍັງມີຊີວິດຢູ່. (ຕື່ມຄວາມທີ່ຂາດ)

**35** ຖ້າທ່ານພົບຄົນທີ່ບອກວ່າ ເຊື່ອໃນການຄືນພະຊົນກໍໄດ້ ຫຼືບໍ່ເຊື່ອກໍໄດ້ ທ່ານຈະຕອບເພິ່ນຢ່າງໃດ? ______________________________________________________________

______________________________________________________________________

______________________________________________________________________

*ຈົ່ງເປີດບົດເສັງທີ 3!*

**ຄຳຕອບ:**

**1** *ຮູບ ກ*

**2** *ກ. ອຸບໂມງ ຂ. ປາກົດມາວ່າມີຊີວິດຢູ່ ຄ. ປ່ຽນທ່າທີໃໝ່*

**ຄຳຕອບ (ຕໍ່):**

**3** *ກ ຖືກ*

**4** *ກ. ຂີ້ຢ້ານ ຂ. ກ້າຫານ*

**5** *ກ້າຫານ*

**6** *ກ. ບໍ່ປ່ຽນ ຂ. ເຂົາເຫັນພະອົງແທ້*

**7** *ຂ ຖືກ*

**8** *ກ. ກ້າຫານ ຂ. ຮັບເຊື່ອໃນພະອົງ*

**9** *ກ. ເຢລູຊາເລັມ ຂ. ເຢລູຊາເລັມ ຄ. ເຢລູຊາເລັມ*

**10** *ກ ຖືກ*

**11** *ການຄືນພະຊົນ*

**12** *ຂ ຖືກ*

**13** *ບໍ່*

**14** *ຄ ຖືກ*

**15** *ສືບສວນ*

**16** *ກ. ລູກສິດ... ກ້າຫານ ຂ. ເຢລູຊາເລັມ... ຮັບເຊື່ອໃນພະອົງ*

**17** *ຄືນພະຊົນ*

**18** *ກ. ອຸບໂມງຫວ່າງເປົ່າ ພະເຢຊູປາກົດມາວ່າ ມີຊີວິດຢູ່ ມີຫຼາຍຄົນທີ່ປ່ຽນທ່າທີໃໝ່*
*ຂ. ເຊື່ອວ່າພະເຢຊູຄືນພະຊົນ*

**19** *ຂ ຖືກ*

**20** *ກ. ເຢລູຊາເລັມ ຂ. ເພາະເຂົາຢູ່ໃກ້ກັບສະຖານທີ່ ທີ່ພະອົງຕາຍແລ້ວຄືນມາ*

**21** *ປະຫວັດສາດລາວ*

**22** *ຂ ຄ ຖືກ*

**23** *ກ. ເປັນຄວາມຈິງທັງສອງ ຂ. ເປັນແຕ່ນິທານ*

**24** *ເປັນການບໍ່ຈິງ*

**25** *ບໍ່ມີປະໂຫຍດ ພະຍານບໍ່ຈິງ ຜິດຍາບ ຈົບຫາຍ*

**26** *ຄ ຖືກ*

**27** *ຄ ຖືກ*

**28** *ກ ຖືກ*

**29** *ນິທານ*

**30** *ເຊື່ອ*

**31** *ກ. ຄວາມບາບ ຂ. ຊີວິດອັນຕະຫຼອດໄປ ຄ. ຫວັງ... ໝັ້ນຄົງດ້ານວິນຍານ*

**32** *ຊຽງໝັ້ງງ*

**33** *ກ. ອຸບໂມງຫວ່າງເປົ່າ ຂ. ພະອົງປາກົດມາ ຄ. ຫຼາຍຄົນປ່ຽນທ່າທີ*

**ຄຳຕອບ (ຕໍ່):**

**34** *ຄືນ... ຕາຍ*

**35** *ຖ້າບໍ່ເຊື່ອ ບໍ່ມີການລອດພົດບາບ ບໍ່ມີການທີ່ເຮົາຈະຄືນຈາກຕາຍຈຶ່ງໄດ້ຊີວິດອັນຕະຫຼອດໄປບໍ່ມີຄວາມຫວັງ ບໍ່ມີຄວາມໝັ້ນຄົງດ້ານວິນຍານ (ຄຳຄ້າຍຄືກັນກໍໄດ້)*